# ຫຼັກສູດຊັ້ນປະຖົມສຶກສາ ປີທີ 3 ສະບັບປັບປຸງໃໝ່

> ພາສາລາວ
> ພາສາອັງກິດ
> ວິທະຍາສາດ ແລະ ສິ່ງແວດລ້ອມ
> ພະລະສຶກສາ



# ຄຳແນະນຳລວມ ສຳລັບຫຼັກສູດຊັ້ນປະຖົມສຶກສາ ປີທີ 3

ກະຊວງສຶກສາທິການ ແລະ ກິລາ ໄດ້ພັດທະນາຫຼັກສູດຊັ້ນປະຖົມສຶກສາ ແຫ່ງຊາດ ສະບັບປັບປຸງໃໝ່ ແລະ ສື່ການຮຽນການສອນແບບໃໝ່ ສຳລັບ ນັກຮຽນ ແລະ ຄູສອນ. ການຈັດຕັ້ງປະຕິບັດການຮຽນການສອນຫຼັກສູດຊັ້ນ ປະຖົມສຶກສາ ສະບັບປັບປຸງໃໝ່ໃນໂຮງຮຽນປະຖົມ ໄດ້ດຳເນີນໄປແຕ່ລະຂັ້ນ ຮຽນໃນທຸກໆປີ. ສຳລັບຫຼັກສູດຊັ້ນປະຖົມສຶກສາ ປີທີ 1 ສະບັບປັບປຸງໃໝ່ ໄດ້ ເລີ່ມຈັດການຮຽນການສອນໃນທຸກໂຮງຮຽນ ແຕ່ເດືອນ ກັນຍາ 2019 ແລະ ຊັ້ນປະຖົມສຶກສາ ປີທີ 2 ແຕ່ເດືອນ ກັນຍາ 2020 ທີ່ຜ່ານມາ. ສຳລັບການ ຈັດການຮຽນການສອນຫຼັກສູດຊັ້ນປະຖົມສຶກສາ ປີທີ 3 ຈະເລີ່ມຈັດການຮຽນ ການສອນໃນທຸກໂຮງຮຽນແຕ່ເດືອນ ກັນຍາ 2021 ໃນນີ້ມີວິຊາພາສາລາວ, ພາສາອັງກິດ, ວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ພະລະສຶກສາ ຊຶ່ງໄດ້ຮັບ ການສະໜັບສະໜູນຈາກລັດຖະບານອົດສະຕຣາລີ.

ຄວາມແຕກຕ່າງຫຼັກໆທີ່ຢູ່ໃນຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່ ນີ້ ແມ່ນວິທີການສອນແບບໃໝ່ໂດຍເນັ້ນໃຫ້ນັກຮຽນໄດ້ປະຕິບັດຕົວຈິງ, ຊຶ່ງ ເປັນວິທີສອນແບບເອົານັກຮຽນເປັນໃຈກາງ. ການຮຽນການສອນແບບເນັ້ນໃຫ້ ນັກຮຽນໄດ້ປະຕິບັດຕົວຈິງນີ້ ແມ່ນຊ່ວຍໃຫ້ນັກຮຽນມີບົດບາດຫຼາຍຂຶ້ນໃນ ການອອກຄວາມຄິດຂອງຕົນເອງເຂົ້າໃນຂະບວນການຮຽນ, ນັກຮຽນໄດ້ຮຽນ ໂດຍຜ່ານການປະຕິບັດຕົວຈິງ ຊຶ່ງສະທ້ອນໃຫ້ເຫັນວ່າ ພວກເຂົາເຈົ້າໄດ້ຮັບ ຄວາມຮູ້ໃໝ່ໆ ແລະ ສາມາດນຳໃຊ້ທັກສະໃໝ່ໆຂອງພວກເຂົາເຂົ້າໃນກິດຈະ ກຳຕ່າງໆໃນຫ້ອງຮຽນ ແລະ ນອກຫ້ອງຮຽນ.

ຫຼັກສູດໃໝ່ນີ້ ໄດ້ສະແດງໃຫ້ເຫັນການປ່ຽນແປງຫຼາຍຂຶ້ນໃນການຮຽນການ ສອນ ຊຶ່ງຄູມີບົດບາດສຳຄັນໃນການນຳພາການຮຽນການສອນໃນຫ້ອງຮຽນ ທີ່ ເປັນການສົ່ງເສີມການຮຽນການສອນແບບເນັ້ນໃຫ້ນັກຮຽນໄດ້ປະຕິບັດຕົວຈິງ, ໂດຍເນັ້ນໃສ່ການໃຫ້ຄວາມຊ່ວຍເຫຼືອນັກຮຽນເຂົ້າສູ່ຂະບວນການຮຽນຂອງ ພວກເຂົາຢ່າງມີປະສິດທິພາບ.

ຊຸດອຸປະກອນສື່ການຮຽນການສອນ ສຳລັບຂັ້ນ ປ.3 ແມ່ນເຄື່ອງມືທີ່ສຳຄັນ ເພື່ອຊ່ວຍໃຫ້ຄູສອນປ່ຽນແປງ ຫຼື ປັບປ່ຽນວິທີການຈັດການຮຽນການສອນ. ສຳລັບປຶ້ມຄູ່ມືຄູ ສະບັບປັບປຸງໃໝ່ນີ້ ປະກອບມີຫຼາຍໆຂໍ້ມູນທີ່ເປັນປະໂຫຍດ ແລະ ບົດຮຽນຕົວແບບ/ຕົວຢ່າງ ເພື່ອຊ່ວຍໃຫ້ຄູປັບປ່ຽນ/ປ່ຽນແປງວິທີການ ສອນ. ໃນປຶ້ມຄູ່ມືຄູສະບັບປັບປຸງໃໝ່ນີ້, ແຕ່ລະບົດຮຽນແມ່ນໄດ້ບັນຈຸບັນດາ ກິດຈະກຳຕ່າງໆ ສຳລັບການຮຽນພ້ອມທັງການປະຕິບັດຕົວຈິງໄວ້.

ວິທີການປະເມີນຜົນການຮຽນຂອງນັກຮຽນ ແມ່ນໄດ້ມີການປັບປ່ຽນເພື່ອຊ່ວຍ ຕິດຕາມ ໃນດ້ານທັດສະນະຄະຕິ, ຄວາມຮູ້ ແລະ ທັກສະຕ່າງໆໃນທາງບວກ.



ເພື່ອໃຫ້ຄວາມຊ່ວຍເຫຼືອຄູສອນຫ້ອງຄວບ, ຫຼັກສູດນີ້ ໄດ້ປະກອບແຜນການ ສອນ ແລະ ວິທີດຳເນີນການສອນບົດຮຽນຕ່າງໆ ໃນປຶ້ມຄູ່ມືຄູ ຈະມີຄຳແນະນຳ ສະເພາະໃໝ່ໆ ກ່ຽວກັບວິທີການຈັດການກ່ຽວກັບການສອນຫ້ອງຄວບ ແລະ ຫຼັກສູດໄດ້ຈັດໄປຕາມຫົວຂໍ້ຕ່າງໆ.

### ຊຸດອຸປະກອນສື່ການຮຽນການສອນ ສຳລັບຄູສອນ ຂັ້ນ ປ.3

» ປຶ້ມແບບຮຽນ ຂັ້ນ ປ.3, 1 ຊຸດ: ພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ພາສາອັງກິດ

» ຊຸດຄູ່ມືຄູ ຂັ້ນ ປ.3, 1 ຊຸດ: ພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ, ພາສາອັງກິດ ແລະ ພະລະສຶກສາ

» ປຶ້ມໄວຍາກອນລາວ 1 ເຫຼັ້ມ

» USB 1 ອັນ: ສາມາດເກັບບັນທຶກ:

- ຟາຍສຳເນົາເອກະສານທີ່ເປັນ ພີດີເອບ ສຳລັບປຶ້ມແບບຮຽນ ແລະ ປຶ້ມ ຄູ່ມືຄູ ຂັ້ນ ປ.3
- ບັນທຶກສຽງພາສາອັງກິດ ຂັ້ນ ປ.3 (102 ສຽງ)
- ດົນຕີ ຂັ້ນ ປ.3 (8 ເພງ ແລະ 2 ວິດີໂອ)
- ພາລະສຶກສາ ຂັ້ນ ປ.3 (1 ເພງ ແລະ 1 ວິດີໂອ)
- ຊຸດຄູ່ມື ຝຶກອົບຮົມ ສຳລັບຫຼັກສູດ ຂັ້ນ ປ.3
- ວິດີໂອ ສຳລັບການຝຶກອົບຮົມຄູ

*ຊຸດອຸປະກອນສື່ການຮຽນການສອນເຫຼົ່ານັ້ນຈະໄດ້ແຈກຢາຍ ໃຫ້ຄູສອນຂັ້ນ ປ.3 ທຸກຄົນ ແລະ ຄູສອນໄປເອົາອຸປະກອນ ເຫຼົ່ານັ້ນຢູ່ທີ່ຫ້ອງການສຶກສາທິການ ແລະ ກິລາເມືອງ ຂອງ ພວກເຂົາເຈົ້າ.*

*ກະຊວງສຶກສາທິການ ແລະ ກິລາ ຈະສະໜອງຊຸດອຸປະກອນ ສື່ການຮຽນການສອນ ສຳລັບລາຍວິຊາອື່ນໆຂອງ ຂັ້ນ ປ.3*



ສາມາດເຂົ້າເບິ່ງວິດີໂອໂດຍຜ່ານທາງຊ່ອງຢູທູບ ວິດີໂອ Teacher Development Videos" ແລະ ສາມາດສະແກນຄິວອາໂຄດເພື່ອເຂົ້າໄປເບິ່ງ ວິດີໂອໃໝ່ໆ ກ່ຽວກັບການຮຽນການສອນແບບ ເນັ້ນໃຫ້ນັກຮຽນໄດ້ປະຕິບັດຕົວຈິງ.

# ພາສາລາວ ຊັ້ນ ປ.3




ຫຼັກສູດປະຖົມສຶກສາ ປີທີ 3 ສຳລັບວິຊາ ພາສາລາວ ແມ່ນເນັ້ນໃສ່ອົງປະກອບຫຼັກໆຂອງພາສາລາວ: ການຟັງ ແລະ ການເວົ້າ, ການອ່ານ, ການຂຽນ ລວມທັງ ການຂຽນບົດປະເພດຕ່າງໆ ແລະ ການຊ່ວຍເຫຼືອນັກຮຽນໃນການພັດທະນາທັກສະເຫຼົ່ານັ້ນຂອງພວກເຂົາ.

ນັກຮຽນ ຈະໄດ້ຮຽນຮູ້ກ່ຽວກັບຄວາມຫຼາກຫຼາຍຂອງປະເພດບົດນັບທັງບົດວິທີການ, ບົດສົນທະນາ, ສະແດງຄວາມຄິດເຫັນ, ເລື່ອງເລົ່າຕາມຈິນຕະນາການ (ນິທານ), ກາບກອນ, ບົດອະທິບາຍ, ບົດເລົ່າປະສົບການ (ເລົ່າຄືນ), ຂຽນຈົດໝາຍ ແລະ ຂຽນຂໍ້ຄວາມ ແລະ ບົດພັນລະນາ. ບົດເຫຼົ່ານີ້ ມີການຈັດລຽງຫົວຂໍ້ຕ່າງໆທີ່ໜ້າສົນໃຈ ເຊັ່ນ: ບຸກຄົນດີເດັ່ນທີ່ເປັນຄົນລາວ, ສະຖານທີ່ທີ່ມີຊື່ສຽງ ແລະ ງານປະເພນີຕ່າງໆ.

ໃນແຕ່ລະບົດຮຽນຂອງຊັ້ນ ປ.3, ນັກຮຽນຈະໄດ້ຄົ້ນຄວ້າປະເພດບົດຕ່າງໆ ແລະ ເຮັດກິດຈະກຳເນັ້ນການປະຕິບັດຕົວຈິງຫຼາຍໆອັນ ເພື່ອຊ່ວຍໃຫ້ພວກເຂົາເຈົ້າໄດ້ພັດທະນາທັກສະ ການເວົ້າ, ການຟັງ, ການອ່ານ ແລະ ການຂຽນ ໄປພ້ອມໆກັບການຂະຫຍາຍບັນດາຄຳສັບຕ່າງໆ ແລະ ພັດທະນາຄວາມເຂົ້າໃຈທາງດ້ານໄວຍາກອນລາວຂອງພວກເຂົາພ້ອມ.

ກິດຈະກຳການອ່ານຕ່າງໆໄດ້ເນັ້ນໃສ່ເພື່ອຊ່ວຍໃຫ້ນັກຮຽນສືບຕໍ່ພັດທະນາທັກສະທີ່ຈຳເປັນ ເຊັ່ນ: ການຄາດເດົາ, ການຄິດຫາຄວາມໝາຍຂອງຄຳສັບ, ການອ້າງອີງ/ໄຈ້ແຍກ, ເຂົ້າໃຈຄວາມໝາຍ ແລະ ຕອບກັບບົດຕ່າງໆໄດ້, ບົດອ່ານຍັງໄດ້ເຮັດໜ້າທີ່ເປັນຕົວຢ່າງໃນວຽກການຂຽນ ຊຶ່ງນັກຮຽນໄດ້ຂຽນຈຸດປະສົງທີ່ແຕກຕ່າງກັນເຊັ່ນວ່າ ການສື່ສານຂໍ້ມູນ, ການເລົ່າປະສົບການ, ການສະແດງຄວາມຄິດເຫັນ, ການອະທິບາຍ, ການຂຽນຄຳແນະນຳ ແລະ ການຂຽນບົດເລື່ອງເລົ່າຕາມຈິນຕະນາການ.

ຫຼັກສູດຊັ້ນປະຖົມສຶກສາປີທີ ປ.3 ຍັງໄດ້ສືບຕໍ່ນຳໃຊ້ເຕັກນິກການສອນ ຈາກຊັ້ນ ປ.1 ແລະ ຊັ້ນ ປ.2 ເຊັ່ນດຽວກັນ, ພ້ອມກັນນັ້ນ ຍັງໄດ້ແນະນຳກ່ຽວກັບເຕັກນິກການສອນແບບໃໝ່ ເຊັ່ນ: ການກະກຽມສຳລັບການອ່ານ ແລະ ການຂຽນ.

ທຸກບົດຮຽນ ຈະມີການປະເມີນຜົນການຮຽນແບບຮູບທຳ 2 ຄັ້ງ ເພື່ອປະເມີນການຟັງ ແລະ ການເວົ້າ ເຊັ່ນ: ການປະເມີນການອ່ານ 1 ຄັ້ງ ແລະ ການປະເມີນການຂຽນ 1 ຄັ້ງ.




*ບົດສອນວິຊາພາສາລາວມີ 1 ບົດສອນຕໍ່ອາທິດ ແລະ ໜຶ່ງບົດສອນມີ 9 ຊົ່ວໂມງ.*



*ການຟັງ ແລະ ການເວົ້າ*



*ການອ່ານ*



*ການຂຽນ*

# ພາສາອັງກິດ ຂັ້ນ ປ.3




ຫຼັກສູດຊັ້ນປະຖົມສຶກສາ ປີທີ 3 ວິຊາ ພາສາອັງກິດ ສະບັບປັບປຸງໃໝ່ ແມ່ນ ໄດ້ອອກແບບໃຫ້ສາມາດນຳໃຊ້ວິທີການ ສອນແບບສື່ສານ ເພື່ອຊ່ວຍໃຫ້ນັກຮຽນ ນຳໃຊ້ພາສາອັງກິດເຂົ້າໃນການສື່ສານໃນ ຊີວິດປະຈຳວັນຂອງພວກເຂົາ.

ໃນຫຼັກສູດຊັ້ນປະຖົມສຶກສາ ປີທີ 3, ນັກຮຽນ ໄດ້ຮຽນຄຳສັບທີ່ມີປະໂຫຍດ ທີ່ຫຼາກຫຼາຍ ແລະ ໂຄງສ້າງຂອງຫຼັກ ໄວຍະກອນແບບງ່າຍໆ/ພື້ນຖານເພື່ອ ຊ່ວຍໃຫ້ພວກເຂົາໄດ້ເລີ່ມສື່ສານເປັນ ພາສາອັງກິດໃນທັນທີ.

ຫຼັກສູດນີ້ ໄດ້ເນັ້ນໃສ່ການພັດທະນາທັກສະການຟັງ ແລະ ການເວົ້າ ເພື່ອເຮັດ ໃຫ້ນັກຮຽນໄດ້ຝຶກພາສາອັງກິດທີ່ຫຼາກຫຼາຍ ລວມທັງການພັດທະນາທັກ ສະການປາກເວົ້າປາກເປົ່າທີ່ຕ້ອງການເພື່ອສະໜັບສະໜູນ ການອ່ານ ແລະ ການ ຂຽນໄດ້.

ທັກສະການອ່ານ ແລະ ການຂຽນໄດ້ຮັບການພັດທະນາໂດຍຜ່ານການອອກ ສຽງ ຊຶ່ງເປັນອັນໃໝ່ທີ່ໄດ້ເພີ້ມເຂົ້າຢູ່ໃນຫຼັກສູດ ສະບັບປັບປຸງໃໝ່ນີ້. ໃນການ ອອກສຽງ, ນັກຮຽນໄດ້ຮຽນກ່ຽວກັບການເຊື່ອມໂຍງຕົວອັກສອນ ແລະ ສຽງ ແລະ ເພື່ອນຳເອົາຄວາມຮູ້ນີ້ ໃຊ້ໃນການອ່ານ ແລະ ຂຽນຄຳສັບງ່າຍໆໄດ້. ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບການອອກສຽງຕ່າງໆ ແມ່ນສາມາດເຂົ້າໄປຊອກ ຫາຂໍ້ມູນໄດ້ໃນປື້ມຄູ່ມືຄູ ຂັ້ນ ປ.3 (ໜ້າ 3 - 4) ແລະ ສາມາດເຂົ້າໄປເບິ່ງວີດີ ໂອຢູ່ຊ່ອງຢູທູບ “ວີດີໂອສຳລັບການພັດທະນາຄູ / Teacher Development Videos”.

ການເພີ່ມອັນໃໝ່ອີກອັນໜຶ່ງເຂົ້າໃນຫຼັກສູດຊັ້ນປະຖົມສຶກສາ ປີທີ 3 ແມ່ນ ອຸປະກອນທີ່ເປັນຟາຍສຽງ ຊຶ່ງປະກອບເຂົ້າໃນປື້ມຄູ່ມືຄູ ແລະ ຄູສອນທຸກຄົນ ຈະໄດ້ຮັບ 1 ອັນທີ່ມີຟາຍການບັນທຶກສຽງຕ່າງໆ 102 ສຽງເປັນພາສາອັງກິດ, ຊຶ່ງໄດ້ຮັບການອອກແບບໄວ້ເພື່ອນຳໃຊ້ຄວບຄູ່ກັບປື້ມແບບຮຽນຂັ້ນ ປ.3.

ສຳລັບປື້ມແບບຮຽນຂັ້ນ ປ.3 ນີ້ ຈະມີຮູບພາບຂອງເດັກນ້ອຍລາວ ຈຳນວນ 4 ຄົນ ຊຶ່ງຮູບພາບຂອງພວກເຂົາເຈົ້າ ແລະ ຄອບຄົວຈະປາກົດຢູ່ໃນປື້ມແບບຮຽນ ແລະ ເພື່ອຊ່ວຍປັບເນື້ອໃນ/ບໍລິບົດຂອງພາສາໃໝ່ເພື່ອເຮັດໃຫ້ມີຄວາມໝາຍ ຂຶ້ນຕື່ມ.

ການຮຽນການສອນໂດຍເນັ້ນໃສ່ການປະຕິບັດຕົວຈິງນີ້ໄດ້ຮັບການສົ່ງເສີມໂດຍ ຜ່ານກິດຈະກຳທີ່ມີສ່ວນຮ່ວມທີ່ຫຼາກຫຼາຍລວມທັງການເຮັດວຽກເປັນຄູ່ ແລະ ເຮັດວຽກເປັນກຸ່ມ, ການຮ້ອງເພງ, ການສະແດງບົດບາດສົມມຸດ, ເກມ, ບົດ ເລື່ອງ ແລະ ກິດຈະກຳທີ່ສ້າງສັນ. ຫຼາຍກິດຈະກຳຍັງລວມເອົາອົງປະກອບຫຼາຍ ຄວາມຮູ້ສຶກເພື່ອຊ່ວຍໃຫ້ນັກຮຽນໄດ້ຮຽນຮູ້ໂດຍຜ່ານການເບິ່ງ, ການຟັງ ແລະ ການປະຕິບັດ.

*ໃນປື້ມແບບຮຽນນີ້ ປະກອບມີ 7 ຫົວຂໍ້ ຊຶ່ງລວມມີບົດນຳ ເຂົ້າສູ່ບົດຮຽນ ແລະ ການທວນຄືນບົດຮຽນ, ໃນ 1 ຫົວຂໍ້ ຈະ ມີ 4 ບົດຮຽນ ແລະ ໜຶ່ງບົດຮຽນຈະມີ 3 ຊົ່ວໂມງ.*





# ວິທະຍາສາດ ແລະ ສິ່ງແວດລ້ອມ ຊັ້ນ ປ.3




ຫຼັກສູດຊັ້ນປະຖົມສຶກສາ ປີທີ 3, ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ສະບັບປັບປຸງໃໝ່ ແມ່ນໄດ້ສືບຕໍ່ພັດທະນາທັກສະ ແລະ ຄວາມຮູ້ຂອງນັກຮຽນທີ່ໄດ້ຮຽນມາໃນຊັ້ນປະຖົມສຶກສາ ປີທີ 1 ແລະ ຊັ້ນປະຖົມສຶກສາ ປີທີ 2.

ໃນຊັ້ນ ປ.3, ນັກຮຽນໄດ້ຮຽນຫຼາຍຫົວຂໍ້ເຊັ່ນ: ອາຫານ, ສັດ, ທີ່ຢູ່ອາໄສ, ວົງຈອນການດຳລົງຊີວິດ, ຄຸນລັກສະນະຂອງວັດຖຸຕ່າງໆ, ຄວາມປອດໄພ, ບັນຫາຂອງສິ່ງແວດລ້ອມ ແລະ ອາກາດ.

ໃນຫຼັກສູດນີ້ ເນັ້ນໃສ່ການພັດທະນາທັກສະດ້ານວິທະຍາສາດເຊັ່ນວ່າ ເຮັດໃຫ້ຖືກຕ້ອງ, ການຄາດຄະເນບົນພື້ນຖານຂໍ້ມູນທີ່ມີຢູ່, ການສັງເກດໃນເວລາທົດລອງ, ການວັດແທກ, ການອະທິບາຍຜົນໄດ້ຮັບ, ການຕີລາຄາຂໍ້ມູນ, ການທົດສອບ ແລະ ການແກ້ໄຂບັນຫາ.

ນັກຮຽນ ໄດ້ດຳເນີນການທົດລອງຫຼາຍອັນທີ່ແຕກຕ່າງກັນ ເພື່ອສົ່ງເສີມໃຫ້ນັກຮຽນໄດ້ປະຕິບັດຕົວຈິງ ແລະ ຊ່ວຍໃຫ້ພວກເຂົາເຈົ້າໄດ້ພັດທະນາຄວາມຮູ້ ແລະ ທັກສະທາງດ້ານວິທະຍາສາດ. ບົດບາດຂອງຄູແມ່ນເພື່ອສະໜັບສະໜູນໃຫ້ນັກຮຽນກ້າສະແດງອອກໃນການຕັ້ງຄຳຖາມດ້ວຍຕົນເອງ ແລະ ສາມາດຊອກຫາຄຳຕອບດ້ວຍການນຳໃຊ້ວິທີທາງດ້ານວິທະຍາສາດ.



# ພະລະສຶກສາ ຊັ້ນ ປ.3




ຫຼັກສູດວິຊາພະລະສຶກສາ ຊັ້ນ ປ.3 ສະບັບປັບປຸງໃໝ່ ຈຸດປະສົງເພື່ອຊ່ວຍໃຫ້ນັກຮຽນໄດ້ພັດທະນາທັກສະການສະແດງອອກທາງດ້ານຮ່າງກາຍຂອງພວກເຂົາ.

ໃນຊັ້ນ ປ.3, ນັກຮຽນໄດ້ຮັບການແນະນຳກິດຈະກຳໃໝ່ໆຂອງຮ່າງກາຍເຊັ່ນ: ການເຄື່ອນໄຫວຮ່າງກາຍ, ການສ້າງຄວາມດຸ່ນດ່ຽງ ແລະ ສ້າງຄວາມແຂງແຮງຂອງຮ່າງກາຍ, ໂດຍການຕິດຕາມໃນເວລາພວກເຂົາຫຼິ້ນຢູ່ໃນສະໜາມກິລາ ແລະ ເດີ່ນເຕະບານ.

ໃນການເພີ່ມທັກສະດ້ານຮ່າງການ, ຫຼັກສູດໃໝ່ນີ້ ແມ່ນເນັ້ນໃສ່ການຊ່ວຍໃຫ້ນັກຮຽນໄດ້ພັດທະນາທັກສະອື່ນໆເຊັ່ນ: ທັກສະທາງດ້ານສັງຄົມ ໂດຍສະເພາະທັກສະການສ້າງທີມຜ່ານການຫຼິ້ນເກມຮ່ວມກັນ.

ບົດບາດຂອງຄູສອນໃນການສອນວິຊາພະລະສຶກສາໃນຫ້ອງຮຽນ ແມ່ນເພື່ອຊ່ວຍໃຫ້ນັກຮຽນໄດ້ພັດທະນາທາງດ້ານຮ່າງກາຍ, ຄວາມດຸ່ນດ່ຽງ ແລະ ການປະສານກັນໂດຍຜ່ານກິດຈະກຳຕ່າງໆທີ່ສ້າງຄວາມມ່ວນຊື່ນ ແລະ ການຊຸກຍູ້ໃຫ້ພວກເຂົາໄດ້ສະແດງອອກດ້ານຮ່າງກາຍ.





# ການວາງແຜນການສອນ

ຮ່າງແຜນການສອນ ແມ່ນໄດ້ຮັບການປັບປຸງໂດຍໃຫ້ສອດຄ່ອງກັບໂຄງສ້າງໃນປຶ້ມຄູ່ມືຄູສະບັບໃໝ່ ແລະ ວິທີການສະໜັບສະໜູນຄູສອນໃຫ້ດີຂຶ້ນກວ່າເກົ່າ ດ້ວຍການວາງແຜນການສອນ. ສຳລັບຮ່າງແຜນການສອນຫ້ອງຄວບ ກໍໄດ້ຮັບການປັບປຸງເຊັ່ນດຽວກັນ.

ຄູຄວນອ່ານເອກະສານກ່ຽວກັບການວາງແຜນການສອນ ເພື່ອສ້າງຄວາມເຂົ້າໃຈວ່າຈະວາງແຜນການສອນທີ່ມີປະສິດທິພາບໄດ້ຄືແນວໃດ.

ສຳລັບຮ່າງແຜນການສອນ ໄດ້ແບ່ງອອກເປັນ 5 ພາກ ແລະ ຢູ່ໃນພາກທີ 1 - 4 ຂອງຮ່າງແຜນການສອນທີ່ຕ້ອງການໃຫ້ຄູ ຕື່ມຂໍ້ມູນຂອງແຕ່ລະບົດຮຽນໃສ່. ສຳລັບພາກທີ 5 (ພາກກິດຈະກຳການຮຽນການສອນ) ແມ່ນຕ້ອງເຮັດໃຫ້ສຳເລັດຕາມເວລາຂອງການສອນຂອງແຕ່ລະວິຊາ.

ພາກການປະເມີນຕົນເອງ, ຄູຄວນປະເມີນຕົນເອງໃຫ້ສຳເລັດ 1 ຄັ້ງ ຕໍ່ 1 ບົດຮຽນ ຫຼັງຈາກພາກທີ 5, ຫຼັງຈາກບົດຮຽນນັ້ນ.

### ຍຸດທະສາດທີ່ສຳຄັນ ສຳລັບການວາງແຜນການສອນທີ່ມີປະສິດທິພາບ

» ອ່ານເອກະສານກ່ຽວກັບການວາງແຜນການສອນ

» ຝຶກການວາງແຜນການສອນ ແລະ ສົມທຽບກັບແຜນການສອນຂອງທ່ານໃສ່ກັບບົດສອນສົມບູນທີ່ໄດ້ເຮັດເປັນຕົວຢ່າງໄວ້ (ເບິ່ງເອກະສານທີ່ໄດ້ແຈກຢາຍໃຫ້ເປັນຕົວຢ່າງກ່ຽວກັບການຝຶກອົບຮົມຄູ)

» ສຳລັບຄູສອນຫ້ອງຄວບ, ໃຫ້ຝຶກການວາງແຜນການສອນສຳລັບບົດຮຽນບົດທີ 1, ວິຊາພາສາລາວ ຂັ້ນ ປ.2 ແລະ ຂັ້ນ ປ.3, ຫຼັງຈາກນັ້ນ ໃຫ້ທ່ານຂຽນແຜນການສອນຂອງທ່ານໃຫ້ສຳເລັດ ແລ້ວສົມທຽບກັບແຜນການສອນຕົວຢ່າງທີ່ມີຢູ່ໃນປຶ້ມຄູ່ມືຄູ ວິຊາພາສາລາວ ຂັ້ນ ປ.3.

» ໃຫ້ທ່ານປຶກສາກັບຄູສຶກສານິເທດ ຫຼື ຄູຝຶກຂັ້ນແຂວງ ທີ່ຢູ່ເມືອງຂອງທ່ານ, ຜູ້ອຳນວຍການ ຫຼື ຄູສອນ ຂັ້ນ ປ.1 ແລະ ຂັ້ນ ປ.2 ທີ່ຢູ່ໂຮງຮຽນຂອງທ່ານ ເພື່ອໃຫ້ຮູ້ເພີ່ມກ່ຽວກັບຮ່າງແຜນການສອນແບບໃໝ່.

### ຊຸດເຄື່ອງມືສື່ການຮຽນການສອນ ສຳລັບຄູສອນ ຂັ້ນ ປ.3

ເອກະສານແຈກຢາຍ:

» ຂໍ້ມູນຕ່າງໆກ່ຽວກັບການວາງແຜນການສອນ

» ຮ່າງແຜນການສອນ ຫ້ອງດຽວ (ຮ່າງເປົ່າ)

» ຮ່າງແຜນການສອນ ຫ້ອງດຽວ (ມີຄຳແນະນຳ)

» ຕົວຢ່າງຮ່າງແຜນການສອນ ຫ້ອງດຽວ ທີ່ປະກອບຂໍ້ມູນສຳເລັດແລ້ວ

» ຮ່າງແຜນການສອນ ຫ້ອງຄວບ (ຮ່າງເປົ່າ)

» ຮ່າງແຜນການສອນ ຫ້ອງຄວບ (ມີຄຳແນະນຳ)

ປຶ້ມຄູ່ມືຄູ ວິຊາພາສາລາວ ຂັ້ນ ປ.3

» ຕົວຢ່າງຂອງຮ່າງແຜນການສອນຫ້ອງຄວບທີ່ສົມບູນ

*ຊຸດອຸປະກອນສື່ການຮຽນການສອນດັ່ງກ່າວ ຈະຈັດສະໜອງໃຫ້ຄູສອນ ຂັ້ນ ປ.3 ໄປຮັບເອົາຢູ່ທີ່ ຫ້ອງການສຶກສາທິການ ແລະ ກິລາເມືອງຂອງພວກເຂົາເຈົ້າ.*



ການວາງແຜນການສອນ



ການເກັບມ້ຽນອຸປະກອນສື່ການຮຽນການສອນ



ແລກປ່ຽນບົດຮຽນ ກັບຄູສຶກສານິເທດ ຫຼື ຄູຝຶກຂັ້ນແຂວງຂອງທ່ານ

# ການປະເມີນ

ການປະເມີນ ແມ່ນພາກສ່ວນໜຶ່ງທີ່ສຳຄັນໃນຂະບວນການຮຽນ ຍ້ອນວ່າມັນໄດ້ກຳນົດຈຸດປະສົງຂອງຮຽນຂອງຫຼັກສູດວ່າ ໄດ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຫຼື ບໍ່, ນອກຈາກນີ້ ຍັງຊ່ວຍໃຫ້ຄູຮູ້ວ່ານັກຮຽນໄດ້ຮຽນຫຍັງແດ່ ແລະ ນັກຮຽນຜູ້ໜຶ່ງຮຽນໄດ້ຫຼາຍປານໃດ ແລະ ສາມາດນຳໄປໃຊ້ໄດ້ຄືແນວໃດ, ນັກຮຽນເຫຼົ່ານີ້ຕ້ອງການການຊ່ວຍເຫຼືອເພີ່ມເຕີມຫຍັງແດ່ ເພື່ອບັນລຸຈຸດປະສົງຂອງບົດຮຽນ. ການປະເມີນຈະຊ່ວຍໃຫ້ຄູເຂົ້າໃຈວ່າ ນັກຮຽນໄດ້ຮຽນດີຂຶ້ນຫຼາຍພຽງໃດ ແລະ ຖ້າວ່ານັກຮຽນຕ້ອງການການຊ່ວຍເຫຼືອເພີ່ມເຕີມ. ສິ່ງເຫຼົ່ານີ້ກໍເພື່ອໃຫ້ແນ່ໃຈ/ຮັບປະກັນວ່າ ນັກຮຽນມີຄວາມຮູ້ສຶກໄດ້ຮັບການຊ່ວຍເຫຼືອ ແລະ ມີແຮງຈູງໃຈໃນການເຂົ້າຮ່ວມກິດຈະກຳການຮຽນຢ່າງຫ້າວຫັນ.

ການປະເມີນມີ 2 ຮູບແບບ: ການປະເມີນເພື່ອປັບປຸງ ແລະ ການປະເມີນຜົນສຳເລັດ, ແລະ ຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດ ສະບັບປັບປຸງໃໝ່ ໄດ້ຮວບຮວມເອົາການປະເມີນທັງສອງຢ່າງນີ້ໄວ້. ການປະເມີນຜົນສຳເລັດ ແມ່ນນຳໃຊ້ເພື່ອກວດເບິ່ງນັກຮຽນບັນລຸຈຸດປະສົງຂອງບົດຮຽນໃນຕອນທ້າຍຂອງແຕ່ລະບົດຮຽນ. ສຳລັບການປະເມີນເພື່ອປັບປຸງການຮຽນ ແມ່ນຄູຈະນຳໃຊ້ເພື່ອຄວາມເຂົ້າໃຈວ່ານັກຮຽນຜູ້ໜຶ່ງໃນແຕ່ລະວັນຮຽນໄດ້ດີຄືແນວໃດ, ດັ່ງນັ້ນຄູສາມາດດັດປັບວິທີການສອນ ແລະ ໃຫ້ການສະໜັບສະໜູນນັກຮຽນຜູ້ໜຶ່ງໆໂດຍອີງໃສ່ຄວາມຄືບໜ້າໃນການຮຽນຂອງນັກຮຽນໄດ້.

ຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່ນີ້ ຄວນນຳໃຊ້ການປະເມີນແບບຮູບທຳໃຫ້ຫຼາຍກວ່າການນຳໃຊ້ບົດທົດສອບເປັນເຈ້ຍແບບທາງການເພື່ອປະເມີນຜົນການຮຽນແຕ່ລະອາທິດ/ເດືອນ ການປະເມີນຜົນການຮຽນແບບຮູບທຳນີ້ ຈະນຳໃຊ້ເຂົ້າໃນການປະເມີນໃນຕອນທ້າຍຂອງບົດຮຽນ ເພື່ອໃຫ້ຄະແນນຜົນການຮຽນຂອງນັກຮຽນ. ສ່ວນຕົວເລກຄະແນນເຫຼົ່ານີ້ຈະໄດ້ປ່ຽນໂດຍໃຊ້ສູດການຄິດໄລ່ ແລະ ຈາກນັ້ນນຳໄປບັນທຶກເຂົ້າປຶ້ມບັນທຶກຂອງການປະເມີນຜົນການຮຽນຂອງຄູ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການປະເມີນແບບຮູບທຳນີ້, ທ່ານສາມາດເຂົ້າໄປຊອກຫາຂໍ້ມູນດັ່ງກ່າວໄດ້ທີ່ ປຶ້ມຄູ່ມືຄູ ວິຊາພາສາລາວຊັ້ນ ປ.3 ແລະ ວິດີໂອ 2 ສຳລັບການຝຶກອົບຮົມຄູ.

ການສັງເກດ ແລະ ການຕັ້ງຄຳຖາມ ແມ່ນສອງເຕັກນິກທີ່ສຳຄັນໃນການດຳເນີນການປະເມີນຜົນການຮຽນ.



**ຊຸດເຄື່ອງມືສື່ການຮຽນການສອນ ສຳລັບຄູຊັ້ນ ປ.3**

- ການປະເມີນແບບຮູບທຳ ແມ່ນເລີ່ມຈາກການປະເມີນໄປແຕ່ລະບົດຮຽນ ທີ່ມີໃນປຶ້ມຄູ່ມືຄູ
- ຢູ່ໃນ 4 ວິດີໂອ ກ່ຽວກັບການປະເມີນຜົນການຮຽນຂອງນັກຮຽນທີ່ຢູ່ໃນຊ່ອງຢູທູບ ວິດີໂອສຳລັບການພັດທະນາຄູ
- ປຶ້ມບັນທຶກການເຂົ້າຮ່ວມຝຶກອົບຮົມຫຼັກສູດ ຊັ້ນ ປ.3 ມີ 5 ພາກ (ທຸກກິດຈະກຳ)
- ຄູສຶກສານິເທດ ຫຼື ຄູຝຶກຂັ້ນແຂວງ ທີ່ໄດ້ໃຫ້ການຊ່ວຍເຫຼືອພິເສດ
- ຄູຊັ້ນ ປ.1 ແລະ ຊັ້ນ ປ.2 ຜູ້ທີ່ນຳໃຊ້ວິທີການປະເມີນຜົນການຮຽນຂອງນັກຮຽນແບບໃໝ່ ໃນ 1-2 ປີຜ່ານມາ

ສາມາດເຂົ້າເບິ່ງວິດີໂອໂດຍຜ່ານທາງຊ່ອງຢູທູບ
ວິດີໂອ Teacher Development Videos”
ແລະ ສາມາດສະແກນຄິວອາໂຄດເພື່ອເຂົ້າໄປເບິ່ງ
ວິດີໂອໃໝ່ໆ ກ່ຽວກັບການຮຽນການສອນແບບ
ເນັ້ນໃຫ້ນັກຮຽນໄດ້ປະຕິບັດຕົວຈິງ.

# ຫ້ອງຄວບ

ການສອນສອງຂັ້ນຮຽນ ຫຼື ຫຼາຍຂັ້ນກວ່ານັ້ນໃນໜຶ່ງຫ້ອງຮຽນ ແມ່ນມີຄວາມຫຍຸ້ງຍາກ ແລະ ຍັງຮຽກຮ້ອງຕ້ອງການໃຫ້ຄູຊອກຫາວິທີການສອນທີ່ມີຄວາມແຕກຕ່າງກັນເພື່ອຈັດການຮຽນການສອນ.

ຮູບແບບການສອນຫ້ອງຄວບ ໄດ້ຮັບການພັດທະນາຂຶ້ນ ຊຶ່ງມີເນື້ອໃນ ແລະ ຂໍ້ແນະນຳກ່ຽວກັບການສອນເນື້ອໃນຂອງບົດຮຽນຫ້ອງຄວບ, ໂຄງສ້າງຂອງບົດສອນ, ເຕັກນິກ ແລະ ການຄຸ້ມຄອງຫ້ອງຮຽນ ຊຶ່ງເນື້ອໃນເຫຼົ່ານີ້ ມີຢູ່ໃນວິຊາພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ, ແລະ ພາສາອັງກິດ. ນອກຈາກນີ້ ຍັງມີຮູບແບບການວາງແຜນການສອນຫ້ອງຄວບສຳລັບວິຊາຄະນິດສາດ ຊຶ່ງປັດຈຸບັນກຳລັງທົດລອງຢູ່.

ຍັງມີບາງລາຍວິຊາ ເຊັ່ນ: ດົນຕີ, ສິລະປະກຳ ແລະ ຫັດຖະກຳ ຊຶ່ງເປັນວິຊາທີ່ມີຄວາມຫຍຸ້ງຍາກໃນການສອນລວມກັນ. ທ່ານສາມາດຊອກຫາຄຳແນະນຳເພີ່ມເຕີມໄດ້ຢູ່ໃນເອກະສານຄຳແນະນຳທີ່ມີຢູ່ໃນປຶ້ມຄູ່ມືຄູ ວິຊາພາສາລາວ ຂັ້ນ ປ.3

## ຍຸດທະສາດຫຼັກໆ ສຳລັບການສອນຫ້ອງຄວບທີ່ມີປະສິດທິພາບ:

ທັກສະການສອນຫ້ອງຄວບ:

» ອ່ານປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນ ລ່ວງໜ້າເພື່ອກຽມບົດສອນ.

» ໃນການວາງແຜນການສອນຂອງຕົນ, ຂໍໃຫ້ຄູຄົ້ນຄິດກ່ຽວກັບວິທີ ການສອນທີ່ສາມາດດຳເນີນການສອນພາກນຳສະເໜີ ແລະ ພາກສະຫຼຸບໝົດຫ້ອງໄດ້ ແລະ ຄູສາມາດດັດປັບບັນດາກິດຈະກຳໃຫ້ເພື່ອສ້າງເປັນກິດຈະກຳເປັນຄູ່ ແລະ ກິດຈະກຳເປັນກຸ່ມໄດ້.

» ຖ້າເປັນໄປໄດ້, ສາມາດຈັດໂຕະຕັ່ງໃນຫ້ອງຮຽນໃຫ້ເປັນກຸ່ມ, ແລ້ວໃຫ້ນັກຮຽນຂັ້ນຮຽນດຽວກັນນັ່ງເປັນກຸ່ມລວມກັນໃນມູມໜຶ່ງຂອງຫ້ອງຮຽນ, ແລະ ຈັດໃຫ້ນັກຮຽນຂັ້ນອື່ນນັ່ງເປັນກຸ່ມເຊັ່ນດຽວກັນ ແລະ ນັ່ງກົງກັນຂ້າມກັນ.

» ແບ່ງກະດານເປັນສອງເບື້ອງ; ແຕ່ລະເບື້ອງແມ່ນສຳລັບແຕ່ລະຂັ້ນຮຽນ.

» ໃຫ້ໂອກາດນັກຮຽນຢ່າງເປັນເອກະລາດໃນການເຮັດກິດຈະກຳຮ່ວມກັນເປັນຄູ່/ເປັນກຸ່ມຂອງແຕ່ລະຂັ້ນຮຽນ.

» ໃຫ້ກະກຽມກິດຈະກຳເພີ່ມເຕີມໄວ້, ໃນກໍລະນີທີ່ນັກຮຽນບາງກຸ່ມເຮັດກິດຈະກຳແລ້ວໄວກ່ອນກຸ່ມອື່ນ, ຄູສາມາດເອົາກິດຈະກຳອື່ນໃຫ້ນັກຮຽນກຸ່ມນັ້ນເຮັດເພີ່ມໃນຂະນະທີ່ລໍຖ້າກຸ່ມທີ່ເຮັດກິດຈະກຳທຳອິດບໍ່ທັນແລ້ວ.

» ຄວບຄຸມເວລາໃຫ້ເໝາະສົມ ເພື່ອຮັບປະກັນວ່າທຸກກິດຈະກຳໄປຕາມເວລາທີ່ວາງໄວ້ໃນປຶ້ມຄູ່ມືຄູ.

## ຊຸດເຄື່ອງມືສື່ການຮຽນການສອນ ສຳລັບຄູຂັ້ນ ປ.3

ຊຸດປຶ້ມຄູ່ມືຄູ ແນະນຳລວມກ່ຽວກັບວິຊາພາສາລາວຂັ້ນ ປ.3

ຄູສຶກສານິເທດ ຫຼື ຄູຝຶກຂັ້ນແຂວງ ເພື່ອໃຫ້ການຊ່ວຍເຫຼືອພິເສດ

ຄຳແນະນຳສະເພາະລາຍວິຊາສຳຄັນໃນປຶ້ມຄູ່ມືຄູ ຂັ້ນ ປ.3



ແຜນງານບົດວາແມ່ນແຜນງານທີ່ນຳພາໂດຍລັດຖະບານແຫ່ງ ສປປ ລາວ,
ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ
ຈັດພິມໃນເດືອນ ພຶດສະພາ 2021